SECTION C

ການເຄື່ອນຍ້າຍຂອງພົນລະເມືອງ
Migration

ຄວາມຫລາກຫຼາຍທາງດ້ານວັດທະນະທຳທີ່ພິເສດ ແລະ ຊົນເຜົ່າທີ່ອາໃສຢູ່ໃນ ສປປ ລາວ ແມ່ນມີຂະໜາດກວ້າງຂວາງອັນມີຜົນມາຈາກປະຫວັດສາດທີ່ຍາວນານໃນການຍົກຍ້າຍຖິ່ນຖານເຂົ້າມາ ແລະ ຕະຫຼອດອານາເຂດປະເທດໃນປັດຈຸບັນ. ຄວາມສີວິໄລໃນອະດີດບໍ່ໄດ້ສົ່ງຜົນຜັກດັນຕໍ່ຄົນ ແລະ ວັດທະນະທຳເທົ່ານັ້ນແຕ່ມັນຍັງໄດ້ກໍ່ໃຫ້ເກີດຄວາມແຕກຕ່າງທາງດ້ານເສດຖະກິດ ແລະ ສັງຄົມທີ່ມີອິດທິພົນກະຕຸ້ນຕໍ່ການສື່ສານ ການແລກປ່ຽນ, ການຄ້າ ແລະ ການຍົກຍ້າຍ.

ໃນອາຊີຕາເວັນອອກສຽງໃຕ້, ໂດຍສະເພາະແມ່ນໃນ ສປປ ລາວ, ການອົບພະຍົບໃນຊ່ວງເວລາ 50 ປີຜ່ານມານີ້ແມ່ນມີສາເຫດມາຈາກການຕໍ່ສູ້ກັນໂດຍຄົນພາຍໃນເມືອງນັ້ນເອງ, ສ່ວນໜຶ່ງແມ່ນເນື່ອງມາ ຈາກການບໍ່ເທົ່າທຽມກັນທາງດ້ານເສດຖະກິດໃນທ້ອງຖິ່ນນັ້ນໆ, ຍ້ອນຂາດວຽກເຮັດງານທຳ, ຍ້ອນ ຂາດເຂີນສິ່ງອຳນວຍຄວາມສະດວກ,ຈຶ່ງຫັນມາຊອກຫາແຫຼ່ງຊັບພະຍາກອນ ທຳມະຊາດ, ຍ້າຍຖິ່ນ ເພື່ອການສຶກສາ ຫຼື ຍ້າຍຖິ່ນຍ້ອນຄວາມສະດວກສະບາຍທາງດ້ານພື້ນຖານໂຄງລ່າງ. ນັບຕັ້ງແຕ່ມີການ ປະຕິຮູບເສດຖະກິດຄືນໃໝ່ໃນທ້າຍທົດສະວັດທີ 80 ແລະ ມີການສົ່ງເສີມໃຫ້ມີການລົງທຶນຈາກຕ່າງ ປະເທດຫຼາຍຂຶ້ນ, ຕົວເມືອງ ແລະ ລະບົບຕາໜ່າງການຄົມມະນາຄົມສື່ສານຫຼັກກໍ່ມີການຂະຫຍາຍ ຕົວອອກກວ້າງ ເພື່ອເປັນການເປີດໂອກາດໃໝ່ໃຫ້ແກ່ການທຳມາຫາກິນ ແລະ ການດຳເນີນກິດຈະການ ຕ່າງໆ ທາງດ້ານເສດຖະກິດ.

ປະຊາຊົນກຳລັງສວຍໃຊ້ໂອກາດໃໝ່ໆເຫຼົ່ານີ້ ແລະ ການຍົກຍ້າຍຖິ່ນກໍ່ຍິ່ງມີບົດບາດສຳຄັນຍິ່ງຂຶ້ນເລື້ອຍໆ. ປັດຈຸບັນນີ້, ພວກເຮົາບໍ່ພຽງແຕ່ຈະເຫັນການຍົກຍ້າຍຖິ່ນຈາກຊົນນະບົດເຂົ້າມາໃນຕົວເມືອງເທົ່ານັ້ນ, ເຫດຜົນສ່ວນໃຫຍ່ທີ່ເຮັດໃຫ້ພວກເຂົາຍົກຍ້າຍເຂົ້າມາແມ່ນເພື່ອໂອກາດທາງດ້ານອາຊີບການ ງານໃໝ່, ການສຶກສາທີ່ດີຂຶ້ນ ແລະ ການບໍລິການທາງດ້ານສາທາລະນະສຸກ. ແຕ່ນອກນັ້ນກໍ່ຍັງມີການ ອົບພະຍົບແຮງງານຈາກຊົນນະບົດໜຶ່ງໄປຫາອີກບ່ອນໜຶ່ງແມ່ນພົວພັນເຖິງ ການສ້າງຖະໜົນ ຫົນທາງ, ການພັດທະນາເຂື່ອນໄຟຟ້ານ້ຳຕົກ, ທຸລະກິດທາງດ້ານກະສິກຳ, ການຂຸດຄົ້ນບໍ່ແຮ່ ແລະ ອື່ນໆ. ໃນທີ່ສຸດ, ການອົບພະຍົບພາຍນອກ ປະເທດເພື່ອນບ້ານກໍ່ຍິ່ງເພີ້ມຄວາມສຳ ຄັນຂຶ້ນອີກ ເພາະກ້ອນເງິນທີ່ຈະສົ່ງກັບມາຍັງປະເທດຂອງຕົນນັ້ນ ເປັນບັນຫາທີ່ເຮັດເຂົາເຈົ້າຕັດສິນໃຈຍ້າຍຖິ່ນ.

ໃນປີ 2005 ມີການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສແຫ່ງຊາດ ຊຶ່ງໄດ້ຮວບຮວມເອົາຂໍ້ມູນສະຖິຕິເປັນຄັ້ງທຳອິດໃນການອົບພະຍົບຂອງພົນລະເມືອງ. ຄຳຖາມໄດ້ຖາມກ່ຽວກັບໄລຍະຕ່າງໆ ເຊັ່ນ: ຊ່ວງໄລຍະເວລາທີ່ດຳລົງຊີວິດ, ຊ່ວງໄລຍະເວລາທີ່ສຳຫລວດປະຊາກອນຄັ້ງຫຼ້າສຸດ ແລະ ການ ອົບພະຍົບພາຍໃນຊ່ວງເວລາ 12 ເດືອນກ່ອນມີການສຳຫຼວດພົນລະເມືອງ ແລະ ຖາມກ່ຽວກັບລະ ດັບທີ່ ແຕກຕ່າງກັນເຊັ່ນ: ການອົບພະຍົບພາຍນອກ, ການອົບພະຍົບຂັ້ນເມືອງ ແລະ ຂັ້ນບ້ານ.

ແຜນທີ່ຕ່າງໆ ຕໍ່ໄປນີ້ຈະນຳສະເໜີ ແລະ ແບ່ງແຍກການອົບພະຍົບຍ້າຍຖິ່ນຖານຕ່າງໆ ພາຍໃນ ສປປ ລາວ, ຈຸດເລີ່ມຕົ້ນຈາກບ້ານເກີດເມືອງນອນຂອງພວກເຂົາ ແລະ ປາຍທາງທີ່ພວກເຂົາຈະອົບ ພະຍົບໄປ ເພື່ອຫາສະຖານທີ່ເໝາະສົມໃນການຜະລິດກະສິກຳ, ເພື່ອໂອກາດທາງດ້ານການສຶກສາ, ເພື່ອເຮັດວຽກ ຫຼື ເພື່ອການບໍລິການອື່ນໆທາງດ້ານສັງຄົມ. ນະໂຍບາຍອັນໃໝ່ທາງດ້ານເສດຖະ ກິດແຫ່ງຊາດ, ໂອກາດທາງດ້ານຕະຫຼາດທ້ອງຖິ່ນ ແລະ ການລົງທຶນໂຄງລ່າງພື້ນຖານ ໄດ້ສ້າງແຮງ ດຶງດູດໃຈໃຫ້ແກ່ ຂົງເຂດ ນັ້ນໆ, ໃນຂະນະທີ່ຄວາມຫລ້າຫລັງທາງດ້ານເສດຖະກິດ ສັງຄົມຂອງບາງ ຂົງເຂດໄດ້ເລັ່ງກະຕຸ້ນ ໃຫ້ຄົນ ໃນເຂດນັ້ນໆ ອົບພະຍົບ. ປະມານ 5% ຂອງພົນລະເມືອງ ລາວທີ່ຍັງ ຢູ່ໃນການຍົກຍ້າຍໄປມາ. ການ ແບ່ງແຍກແຜນທີ່ຕໍ່ໄປນີ້ຈະຊີ້ໃຫ້ພວກເຮົາເຫັນທ່າອ່ຽງຕ່າງໆ ແລະ ຈຳນວນພົນທີ່ຍັງອົບພະຍົບ ໄປມາ ພາຍໃນປະເທດ.

ທ່ານຜູ້ອ່ານຄົນໃດກໍ່ຕາມທີ່ສົນໃຈເລື່ອງການຍົກຍ້າຍຕ້ອງຢ່າລືມວ່າພາກສ່ວນອື່ນໆ ເອງກໍ່ມີຄວາມ ສຳຄັນຕໍ່ການຊີ້ບອກກ່ຽວກັບຮູບແບບຂອງການຍົກຍ້າຍເຊັ່ນກັນ. ຕົວຢ່າງແຜນທີ່ທີ່ລະອຽດຂອງການ ແຈກຢາຍປະເພດຊົນເຜົ່າຕາມໝວດພາສາ (ແຜນທີ່ F.3) ສະແດງໃຫ້ເຫັນຮູບແບບຂອງການ ອົບ ພະຍົບທີ່ພົ້ນເດັ່ນຂອງເຜົ່າຊົນລາວ ແລະ ໄທ ຕາມເສັ້ນສູນກາງໃຫຍ່ຂອງ ການຄົມມະນາຄົມປະກົດ ວ່າສ່ວນໃຫຍ່ຈະແມ່ນເມືອງທີ່ຢູ່ເຂດຫ່າງໄກສອກຫລີກຫຼາຍກວ່າ. ກົງກັນຂ້າມ, ແຜນທີ່ດຽວກັນນັ້ນ ສະແດງໃຫ້ເຫັນ ວ່າຄົນທີ່ອົບພະຍົບສ່ວນໃຫຍ່ແມ່ນມຸ້ງໜ້າເຂົ້າໄປນະຄອນຫຼວງວຽງຈັນ ແລະ ຍັງແມ່ນ ກຸ່ມຊົນເຜົ່າໃຫຍ່ຫຼາຍກວ່າຊົນສ່ວນ ນ້ອຍ. ສິ່ງເຫຼົ່ານີ້ແມ່ນໄດ້ໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບການປ່ຽນແປງ ຂອງປະຊາກອນທີ່ຢູ່ໃນຊົນນະບົດ ແລະ ຕົວເມືອງໃນປະເທດລາວໃນປະຈຸບັນນີ້. ສຸດທ້າຍນີ້, ການ ປຽບທຽບອັດຕາສ່ວນເພດໃນຊ່ວງທີ່ເດັກນ້ອຍເກີດ (ແຜນທີ່ B.7) ແລະ ພົນລະເມືອງທັງໝົດ (ແຜນທີ່ B.6) ສະແດງໃຫ້ເຫັນຮູບແບບຂອງການຍົກຍ້າຍໂດຍການແບ່ງແຍກເພດໃນທົ່ວປະເທດ.

The exceptional cultural and ethnic diversity of the Lao PDR is largely a result of a long history of people moving into and through the country's present territory. Ancient civilisations within the region have not only alternately influenced people and culture but also created differentials of economic and societal power that have stimulated communication, exchanges, trade, and migration.

In Southeast Asia, particularly in the Lao PDR, migration during the last 50 years has primarily been caused by civil strife, and partly by regional economic disparities, lack of employment and lack of access to natural resources, education and infrastructure facilities. Since the economic reforms at the end of the 80's and the growing promotion of foreign investment, cities and main transportation networks have been expanding thereby offering new opportunities for livelihoods and economic activities.

People are seizing these new opportunities and migration is becoming more and more important. Nowadays we do not see migration only from rural to urban centres, mainly driven by new job opportunities and better educational and health services, but also that of rural to rural labour migration related to road construction, hydropower development, agribusiness, mining, etc. Finally, external migration to neighbouring countries has also become of increasing importance and remittances are an issue to be taken into consideration.

The 2005 National Population and Household Census has for the first time collected data on the migration of the population. The questions asked were about different time intervals, i.e. life-time, the time since the last census and migration in the 12 months prior to the census, as well as at different spatial scales, i.e. external migration, district- , and village migration.

The following maps present and analyse migration within the Lao PDR, the origins and destinations of people leaving their birthplaces to find land for agricultural production, opportunities for education, employment or access to social services elsewhere. New national economic policies, access to regional markets and infrastructure investments have created very attractive areas while the socio-economic standstill in remote areas exerts a push to leave. Around 5% of the Lao people are on the move. The following maps analyse the trends, origins, directions and number of people are still migrating within the country.

Any reader interested in aspects of migration should remember that other sections may also provide important indications on migration patterns. The detailed map of ethno-linguistic categories for example (Map F.3) reveals remarkable patterns of ethnic Lao and Tai moving along the main axes of transportation to become majorities in remote district towns. Conversely, the same map shows that the majority of migrants moving to Vientiane Capital still belong to ethnic majority groups rather than minorities. This sheds additional light on the current rural-urban dynamics of the country. Finally, a comparison of sex ratios at the time children are born (Map B.7) and of the entire population (Map B.6) reveal gender-segregated migration patterns across the country.

C.1

ການຍົກຍ້າຍພາຍໃນ
Internal migration

ເພື່ອເປັນການຮວບຮວມເອົາຂໍ້ມູນຂອງການຍົກຍ້າຍພາຍໃນແມ່ນເປັນສ່ວນໜຶ່ງຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສແຫ່ງຊາດໃນປີ 2005, ໄດ້ຕັ້ງຄຳຖາມ 2 ປະເພດທີ່ຕ່າງກັນເຊິ່ງ ຄຳຖາມທຳອິດ ແມ່ນຖາມປະຊາຊົນວ່າບ້ານເກີດ ເມືອງນອນເດີມຂອງພວກເຂົາແມ່ນຢູ່ເຂດໃດ ແລະ ພວກເຂົາໄດ້ ອາໄສຢູ່ເຂດໃດກ່ອນມີການສຳຫລວດພົນລະເມືອງຄັ້ງກ່ອນ. ຄຳຖາມທີ່ສອງແມ່ນຖາມວ່າມີສະມາຊິກ ຄົນໃດແດ່ທີ່ຍ້າຍເຂົ້າ ແລະ ອອກພາຍໃນຊ່ວງເວລາ 12 ເດືອນຜ່ານມາ.

ແຜນທີ່ທຳອິດນີ້ແມ່ນສະແດງໃຫ້ເຫັນເຖິງຈຳນວນສ່ວນຮ້ອຍຂອງປະຊາກອນບ້ານທີ່ມີຖິ່ນຖານຕົ້ນກຳ ເນີດມາຈາກເຂດອື່ນທີ່ບໍ່ແມ່ນທີ່ຢູ່ໃນປັດຈຸບັນຂອງພວກເຂົາ. ສະນັ້ນຕົວຊີ້ບອກເຫຼົ່ານີ້ແມ່ນໄດ້ ສະແດງ ໃຫ້ເຫັນເຖິງການຍົກຍ້າຍພາຍໃນຂອງຊ່ວງເວລາທີ່ດຳເນີນຊີວິດຢູ່. ພົນລະເມືອງສ່ວນໃຫຍ່ (82%) ແມ່ນຍັງດຳລົງຊີວິດຢູ່ໃນສະຖານທີ່ໆ ເຂົາເຈົ້າກຳເນີດ. ອັດຕາສ່ວນດັ່ງກ່າວນີ້ແມ່ນມີລະດັບ ທີ່ສູງກ່ວາ ໃນນະຄອນຫຼວງວຽງຈັນເຊິ່ງ 41% ຂອງປະຊາກອນທີ່ອາໃສຢູ່ ໃນປັດຈຸບັນນີ້ແມ່ນມີຕົ້ນກຳ ເນີດມາຈາກ ທອ້ງຖິ່ນອື່ນ. ນອກຈາກນັ້ນກໍ່ຍັງເປັນເຂດທີ່ມີອັດຕາສ່ວນ ສະເລ່ຍສູງຂອງການ ຍົກຍ້າຍ ໃນຊ່ວງເວລາທີ່ ດຳລົງຊີວິດເຊິ່ງກວມ 20% ຂອງຈຳນວນປະຊາກອນທີ່ພົບເຫັນ ໄດ້ຕາມແຂວງຕ່າງໆ ເຊັ່ນ: ວຽງຈັນ, ຫຼວງພະບາງ, ບໍ່ແກ້ວ, ບໍລິຄຳໄຊ, ຊຽງຂວາງ, ແລະ ເຊກອງ.

ໂດຍທົ່ວໄປແລ້ວແຂວງທີ່ມີອັດຕາສ່ວນການຍົກຍ້າຍໜ້ອຍກວ່າ 10% ແມ່ນແຂວງຫຼວງພະບາງ ແລະ ແຂວງຫົວພັນ. ສ່ວນແຂວງຜົ້ງສາລີ ແລະ ແຂວງອຸດົມໄຊມີພື້ນທີ່ອັດຕາການຍົກຍ້າຍທີ່ຕ່ຳທີ່ສຸດ ຢູ່ໃນ ພາກເໜືອຂອງປະເທດ ສປປ ລາວ.

ສະຫຼຸບລວມ ການຍົກຍ້າຍພາຍໃນຂອງຊ່ວງເວລາດຳລົງຊີວິດຢູ່ເຊິ່ງສາມາດພົບເຫັນໄດ້ແມ່ນມີ ຄວາມ ກ່ຽວພັນອັນໃກ້ຄຽງກັບເສັ້ນສູນກາງສຳຄັນຂອງໂຄງລ່າງ ແລະ ບາງເຂດສ່ວນໃຫຍ່ແມ່ນຢູ່ໃນ ເຂດພາກ ກາງ ແລະ ສ່ວນເຂດພາກເໜືອ ແລະ ເຂດພາກໃຕ້ຈຶ່ງມີອັດຕາຂອງການຍົກຍ້າຍທີ່ສູງກວ່າ ເຂດອອ້ມຂ້າງອື່ນ.

In order to gather information on internal migration as part of the 2005 National Population and Housing Census, two different types of questions were asked. The first question asked the people being counted in which district they had been born and where they had been living at the time of the previous census. The second question asked if any member of a household had moved in and out during the 12 months prior to the census.

This first map shows the percentage of the village population who had been born in a district other than that of their current residence. So this indicator presents the life-time internal migration. The majority of the population (82%) were found to be still living in the district in which they were born. Lifetime migration is significantly higher in Vientiane Capital where 41% of the current population were born in other districts. Further high lifetime migration with averages of over 20% was recorded in the provinces of Vientiane, Luangnamtha, Bokeo, Borikhamxay, Xiengkhuang, and Sekong.

For the most part the provinces of Luangprabang and Huaphanh have migration rates of less than 10% while the provinces of Phongsaly and Oudomxay have areas with the lowest migration rates in the north of Lao PDR.

Overall it can be seen that internal life time migration is closely related to the main infrastructure axes, and that some regions mainly in the centre, the north and the south have significantly higher rates than their surroundings.

C.1
ການຍົກຍ້າຍພາຍໃນ
Internal migration



C.2

ການຍົກຍ້າຍເຂົ້າເມືອງ
District migration

ຜົນຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສໃນປີ 2005 ໄດ້ມີຂໍ້ມູນກ່ຽວກັບການຍົກຍ້າຍໃນຊ່ວງໄລຍະທີ່ດຳລົງຊີວິດ (ເບິ່ງແຜນທີ່ C.1) ແລະ ໄດ້ມີຂໍ້ມູນເພີ່ມເຕີມກ່ຽວກັບການຍົກຍ້າຍເຊິ່ງໄດ້ຍຶດເອົາການຍົກຍ້າຍທັ່ງສອງຢ່າງຄື ພາຍໃນ ແລະ ພາຍນອກປະເທດໃນຊ່ວງໄລຍະເວລາ 12 ເດືອນກ່ອນການສຳຫລວດ. ແຕ່ລະຄົວເຮືອນຖືກຖາມວ່າມີສະມາຊິກຄົນໃດທີ່ໄດ້ຍ້າຍເຂົ້າມາຮ່ວມອາໃສຢູ່ໃນຄອບຄົວຂອງຕົນ ຫຼື ໄດ້ຍ້າຍອອກໄປຢູ່ໃນບ່ອນອື່ນໃນຊ່ວງເວລາດຽວກັນ. ຜູ້ທີ່ຖືກສຳພາດຍັງອາດຈະຖືກຖາມເພີ້ມອີກວ່າແຂວງ ແລະ ເມືອງໃດທີ່ພວກເຂົາມາຈາກ ຫຼື ໄປຫາ. ຄຳຖາມແມ່ນອາດມີການລາຍງານຜິດພາດ, ໂດຍສະເພາະແມ່ນໃນກໍລະນີທີ່ຫົວໜ້າຄອບຄົວຍັງສາມາດ ຈື່ການເຄື່ອນຍ້າຍ ຫຼື ວ່າການຕອບຄຳຖາມນັ້ນແມ່ນຍັງບໍ່ກ້ຽງໄປກ້ຽງມາ.

ການສຳຫລວດປີ 2005 ໄດ້ສະແດງໃຫ້ເຫັນວ່າຈຳນວນທັງໝົດ 53,600 ຄົນ ໄດ້ມີການຍົກຍ້າຍ. ຈຳນວນຄົນເຫຼົ່ານີ້ແມ່ນຫຼາຍກວ່າຈຳນວນສະເລ່ຍຂອງການໂຍກຍ້າຍປະຈຳປີ ລະຫວ່າງການສຳຫລວດ ຂອງທັງ 2 ຄັ້ງຄືໃນ ປີ 1995 ແລະ ປີ2005. ເຊິ່ງໃນ 60% ຂອງການຍົກຍ້າຍແມ່ນການຍົກຍ້າຍຢູ່ພາຍ ໃນແຂວງ ແລະ ປະມານ 40% ແມ່ນການຍົກຍ້າຍຈາກແຂວງໜຶ່ງໄປຫາ ແຂວງອື່ນ. ນອກຈາກນັ້ນ, 40% ແມ່ນ ການຍົກຍ້າຍຂ້າມເຂດແດນຈາກແຂວງອື່ນເຂົ້າໄປຫານະຄອນຫລວງວຽງຈັນ.

ແຜນທີ່ນີ້ໄດ້ສະແດງໃຫ້ເຫັນເຖິງເຂດສ່ວນໃຫຍ່ຂອງເມືອງພົບວ່າແມ່ນການເຄື່ອນຍ້າຍສຸດທິຂອງພົນລະເມືອງແມ່ນຍ້າຍອອກ ເຊິ່ງໃນທາງກົງກັນຂ້າມກັນແມ່ນມີພຽງເຂດສ່ວນໜ້ອຍຂອງນະຄອນຫຼວງວຽງຈັນ ແລະ ແຂວງຄຳມ່ວນ, ເຊກອງ, ແລະ ອັດຕະປື ກໍ່ພົບເຫັນມີການເຄື່ອນຍ້າຍສຸດທິແມ່ນເຂົ້າມາໃນ ຊ່ວງເວລາ 12 ເດືອນກ່ອນການສຳຫລວດພົນລະເມືອງໃນປີ 2005. ແຂວງຫົວພັນ, ແຂວງຊຽງຂວາງ, ແລະແຂວງຫຼວງພະບາງ ແມ່ນມີຈຳນວນການເຄື່ອນຍ້າຍອອກສຸດທິແມ່ນສູງທີ່ສຸດ. ມັນເປັນການງ່າຍທີ່ຈະເຂົ້າໃຈເຖິງສາເຫດຂອງການຍົກຍ້າຍຈາກ ເຂດຫ່າງໄກ ຊອກຫຼີກໄປຫາເຂດທີ່ຈະເລີນຮຸ່ງເຮືອງ ຫຼື ໃນຂົງເຂດທີ່ກຳລັງໄດ້ຮັບການພັດທະນາເຊັ່ນຢູ່ໃນຕົວເມືອງເອກຂອງປະເທດ. ເຖິງຢ່າງໃດກໍ່ດີ, ອັດຕາ ສ່ວນສູງຂອງການຍົກຍ້າຍເຂົ້າມາຫາເຂດທີ່ຫ່າງໄກສອກຫຼີກແມ່ນຍາກຕໍ່ການອະທິບາຍ.

In addition to life-time migration (see Map C.1) the 2005 National Population and Housing Census also captured the migration both within and out of the country during the 12 months prior to the census. Households were asked if any member had joined or left the household during this period. The respondents were also asked for the destination or the origin of the migration in terms of the province and district. The questions were subject to reporting errors, in particular whether the head of household could remember the movements and whether the question could have been considered as having been sensitive.

The 2005 Census revealed that a total of 53,600 people had migrated which is many more than the average annual migration between the two censuses of 1995 and 2005. Of this migration 60% was migration within a single province and about 40% was province-to-province migration. Furthermore, 40% of the migrants that migrated across province boundaries went to the capital, Vientiane.

The map shows that the majority of districts are experiencing a net emigration whereas only few districts of Vientiane Capital and of the provinces of Khammuane, Sekong, and Attapeu saw a net immigration during the 12 months prior to the 2005 Census. Huaphanh, Xiengkhuang, and Luangprabang Provinces experienced the largest net outflows. The migration from remote areas to more prosperous or developing regions such as the country's capital is easy to interpret. However, the high immigration rates in the more remote districts are less easy to explain.

C.2
ການຍົກຍ້າຍເຂົ້າເມືອງ
District migration



C.3

ການຍົກຍ້າຍເຂົ້າບ້ານ
Village in-migration

ການຍົກຍ້າຍເຂົ້າບ້ານແມ່ນສະແດງໃຫ້ເຫັນຢູ່ບ່ອນວ່າມີຄົນມາພັກອາໃສຢູ່ພາຍໃນບ້ານໃດບ້ານໜຶ່ງ ໃນຊ່ວງໄລຍະເວລາ 12 ເດືອນ ກ່ອນການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສແຫ່ງຊາດ. ເມື່ອເບິ່ງ ແຜນທີ່ນີ້ແລ້ວພວກເຮົາຄວນຄຳນຶງວ່າໂດຍທົ່ວໄປແລ້ວ ອັດຕາສ່ວນຂອງການຍົກຍ້າຍອອກແມ່ນສູງກວ່າການຍົກຍ້າຍເຂົ້າຢູ່ໃນລະດັບທົ່ວປະເທດ ແລະ ລະດັບຂອງເມືອງສ່ວນໃຫ່ຍ. ແຜນທີ C.2 ສະແດງໃຫ້ເຫັນກໍລະນີຍົກເວັ້ນຂອງທ່າອ່ຽງທົ່ວໄປ. ໃນຂະນະດຽວກັນນັ້ນພວກເຮົາກໍ່ສາມາດເຫັນວ່າ ອັດຕາການຍົກຍ້າຍເຂົ້າບ້ານທຳມະດາແລ້ວແມ່ນມີຂ້ອນຂ້າງຕ່ຳ ແລະ ອັດຕາສ່ວນນັ້ນແມ່ນຕ່ຳກວ່າ 1% ໃນຂົງເຂດສ່ວນໃຫຍ່. ມັນເປັນສິ່ງທີ່ໜ້າສົນໃຈທີ່ຈະຕ້ອງໄດ້ສັງເກດເບິ່ງຢູ່ທີ່ຂໍ້ຍົກເວັ້ນເພື່ອໄປ ສົມທຽບໃສ່ກັບກົດເກນທົ່ວໆໄປ. ເຖິງຢ່າງໃດກໍ່ຕາມ, ພວກເຮົາຄວນຄຳນຶງວ່າຢູ່ໃນລະດັບຂັ້ນບ້ານ ຂະໜາດຂອງຕົວຢ່າງແມ່ນນ້ອຍທີ່ສຸດ ແລະ ດັ່ງນັ້ນ ພວກເຮົາຕ້ອງມະມັດລະວັງຕໍ່ກັບອັດຕາສ່ວນທີ່ສູງຢູ່ໃນບ້ານທີ່ມີຄວາມໂດດດ່ຽວ. ໃນອີກດ້ານໜຶ່ງ, ຜູ້ອ່ານຄວນເບິ່ງ ສຳລັບກຸ່ມຂອງບ້ານທີ່ປະກົດມີອັດຕາສ່ວນການຍົກຍ້າຍເຂົ້າບ້ານສູງ ເຊິ່ງມັນເປັນຕົວຊີ້ແຈ້ງທີ່ໜ້າເຊື່ອຖືໄດ້ເພື່ອນຳມາສະແດງໃຫ້ເຫັນເຖິງປະກົດການຂອງຂະບວນການທີ່ສຳຄັນດັ່ງກ່າວ.

ຮູບແບບຄືດັ່ງນີ້ສາມາດພົບເຫັນໄດ້ໃນເຂດທາງພາກເໜືອສຸດຂອງແຂວງບໍ່ແກ້ວ, ຕາມເຂດທາງພາກກາງຂອງແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ, ໃກ້ກັບປາກອູ, ບ່ອນທີ່ມີອັດຕາການຍົກຍ້າຍເຂົ້າບ້ານ ໂດຍທົ່ວໄປແລ້ວ ແມ່ນມີຫຼາຍກວ່າ 3%. ເຊັ່ນດຽວກັນກັບການປະກົດການຈິງແມ່ນສາມາດພົບເຫັນໄດ້ໃນເຂດພາກໃຕ້ຂອງແຂວງຊຽງຂວາງ, ຊຶ່ງແຕ່ກ່ອນແມ່ນເປັນເຂດພິເສດໄຊສົມບູນ ແລະ ໃນເຂດທາງ ພາກກາງຂອງແຂວງຈຳປາສັກ.

ເຫັນໄດ້ຢ່າງຈະແຈ້ງວ່າ, ໃນນະຄອນຫລວງວຽງຈັນ ແລະ ແຂວງວຽງຈັນມີການຍົກຍ້າຍເຂົ້າຂອງປະຊາກອນໃນເກືອບທຸກໆພື້ນທີ່ ແລະ ມີອັດຕາສ່ວນທີ່ສູງ ຍ້ອນເຫດຜົນທີ່ມີຄວາມຈະເລີນຮຸ່ງເຮືອງ ແລະ ເປັນເຂດທີ່ມີການລົງທຶນຢ່າງກວ້າງຂວາງໃນພື້ນທີ່ເຫຼົ່ານັ້ນ.

Village in-migration shows the people that have come to stay in a village during the 12 months prior to the National Population and Housing Census. When looking at this map we should take into account the fact that at the level of both the country as well as at that of most of the districts emigration is higher than immigration. Map C.2 shows the exceptions to this general tendency. At the same time we can observe that village immigration is generally quite low with the majority of regions showing a rate of less than 1%. It is interesting to look at the exceptions to this general rule. We should however remember the very small sample size at the village level and be careful when interpreting high rates in isolated villages. Rather, the reader should look for clusters of villages presenting higher in-migration rates, which are a more reliable indicator for the occurrence of significant processes.

Such patterns can be found in the very northern tip of the province of Bokeo, in the centre of Oudomxay as well as in Luangprabang province, near Pak Ou, where in-migration is generally greater than 3%. The same phenomenon can be observed in the south of Xiengkhuang province, in the former Xaysomboune Special Zone as well as in the centre of Champasack province.

More obviously, Vientiane Capital and Vientiane province have in-migration in almost every area and at a high percentage as a result of the prosperity and large investments in the region.

C.3
ການຍ້າຍເຂ້າບ້ານ
Village in-migration



C.4

ການຍ້າຍອອກນອກບ້ານ
Village out-migration

ເມື່ອມັນມີການຍ້າຍເຂົ້າມາຫາພື້ນທີ່ສະເພາະ (ເບິ່ງແຜນທີ່ C.3), ມັນປາສາຈາກບໍ່ໄດ້ວ່າຜູ້ທີ່ຍ້າຍເຂົ້າມານັ້ນແມ່ນຈະຕ້ອງມາຈາກບ່ອນໃດໜຶ່ງ. ດັ່ງນັ້ນຢູ່ໃນແຜນທີ່ນີ້ແມ່ນໄດ້ສະແດງໃຫ້ເຫັນອັດຕາສ່ວນຮ້ອຍຂອງປະຊາກອນຜູ້ທີ່ໄດ້ຍ້າຍອອກຈາກບ້ານໃນແຕ່ລະບ້ານ. ຄວນຈື່ໄວ້ສະເໝີວ່າຈຳນວນ ທັງໝົດຂອງປະຊາກອນທີ່ຍ້າຍອອກ ຈະມີສູງກວ່າຈຳນວນທີ່ຍ້າຍເຂົ້າເພາະບາງຈຳນວນຂອງຜູ້ ຍ້າຍນັ້ນອາດຈະຍ້າຍໄປຢູ່ຕ່າງປະເທດ, ແຕ່ສ່ວນຫຼາຍແລ້ວແມ່ນຍ້າຍໄປຢູ່ໃນເຂດນະຄອນຫລວງວຽງຈັນ ເຊິ່ງເປັນບ່ອນຮອງຮັບປະຊາກອນທີ່ຍ້າຍພາຍໃນປະເທດເປັນສ່ວນໃຫ່ຍ.

ຮູບແບບອັນສຳຄັນຢ່າງໜຶ່ງທີ່ຕິບຕາຜູ້ເບິ່ງແຜນທີ່ນີ້ແມ່ນແບບຢ່າງຂອງໄລຍະຫວ່າງທີ່ວໄປທີ່ມີຄວາມຄ້າຍຄືກັນຫຼາຍກັບຮູບແບບຂອງແຜນທີ່ C.3. ເວົ້າອີກຢ່າງໜຶ່ງວ່າບ່ອນທີ່ມີອັດຕາສ່ວນການຍ້າຍເຂົ້າທີ່ສູງ ແລະ ກໍ່ເປັນບ່ອນທີ່ມີອັດຕາສ່ວນຂອງການຍ້າຍອອກສູງເຊັ່ນດຽວກັນຊຶ່ງຈະພົບເຫັນໂດຍທົ່ວໄປ. ດັ່ງນັ້ນໃນ ສປປ ລາວການຍ້າຍຈາກເຂດຊົນນະບົດນີ້ໄປຫາເຂດຊົນນະບົດອື່ນ ແມ່ນສາມາດນຳມາອະທິບາຍໄດ້ຢູ່ໃນຂະບວນການຂອງ ການປ່ຽນແປງທີ່ຢູ່ຂອງປະຊາຊົນຢູ່ໃນພື້ນທີ່ສະເພາະໃດໜຶ່ງແຕ່ບໍ່ແມ່ນຢູ່ໃນຂະບວນການຂອງການເຄື່ອນຍ້າຍຂອງພົນລະເມືອງຈາກພາກສ່ວນໜຶ່ງໄປສູ່ອີກພາກສ່ວນອື່ນ. ປະກົດການເຫຼົ່ານີ້ ໝາຍເຖິງບາງຂົງເຂດທີ່ມີການຍ້າຍທີ່ໜອ້ຍ ຊຶ່ງໃນຂະນະທີ່ຂົງເຂດອື່ນນັ້ນມີການຍ້າຍເຂົ້າ ແລະ ອອກໃນເວລາດຽວກັນ.

ພື້ນທີ່ທີ່ມີການຍ້າຍອອກໜອ້ຍທີ່ສຸດແມ່ນຢູ່ທາງພາກເໜືອແຂວງຜົ້ງສາລີ ແລະ ແຂວງຫົວພັນ, ຢູ່ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດຊຶ່ງເປັນແຂວງທີ່ຢູ່ພາກກາງຂອງປະເທດ, ແລະ ແຂວງເຊກອງ ແລະແຂວງອັດຕະປືເຊິ່ງຢູ່ທາງພາກໃຕ້ຂອງປະເທດ. ເຖິງຢ່າງໃດກໍ່ຕາມ, ພື້ນທີ່ພາຍໃນແຂວງຕ່າງໆ ເຫຼົ່ານີ້ບາງເຂດກໍ່ມີການຍ້າຍອອກຢູ່ໃນລະດັບທີ່ສູງເຊັ່ນ: ເມືອງທາງພາກຕາເວັນອອກຂອງແຂວງຜົ້ງສາລີ ແລະແຂວງຫົວພັນ ແລະ ຕາມເຂດເມືອງນາກາຍຂອງແຂວງຄຳມ່ວນ ແລະ ຢູ່ບາງເຂດຂອງແຂວງສະຫວັນນະເຂດ. ຍັງມີບາງບ້ານທາງພາກໃຕ້ຂອງປະເທດທີ່ມີການຍ້າຍອອກເຊິ່ງມີຫຼາຍກວ່າ 3%; ເຊັ່ນວ່າ, ບ້ານຕ່າງໆ ໃນບາງເຂດທາງດ້ານຕາເວັນອອກຂອງ ແຂວງເຊກອງ, ໃນແຂວງ ອັດຕະປື ແລະ ເລາະລຽບຕາມແຄມແມ່ນ້ຳຂອງໃນແຂວງຈຳປາສັກ. ອັດຕາການຍ້າຍອອກທີ່ມີສູງ ນັ້ນເຮົາຍັງສາມາດພົບເຫັນໄດ້ໃນແຂວງສາລະວັນ ເຊິ່ງເປັນບ່ອນທີ່ມີຫຼາຍໝູ່ບ້ານມີອັດຕາການຍ້າຍ ອອກສູງກວ່າ 3%. ສ່ວນໃນນະຄອນຫລວງວຽງຈັນນັ້ນການຍ້າຍອອກແມ່ນເກີດຂຶ້ນຢູ່ຕາມຂົງເຂດ ທີ່ຕັ້ງຢູ່ໃນເຂດ ນອກເທດສະບານເມືອງໃຫຍ່.

ມັນເປັນສິ່ງທີ່ໜ້າສົນໃຈທີ່ຄວນຈະຮັບຮູ້ວ່າຮູບແບບຂອງການໂຍກຍ້າຍອອກແມ່ນບໍ່ມີສູງຢູ່ຕາມເຂດທີ່ມີ ຊາຍແດນຕິດກັບປະເທດເພື່ອນບ້ານ. ຕາມຄວາມເປັນຈິງແລ້ວ ພູມມີປະເທດທີ່ໃກ້ຄຽງກັບຂອງປະເທດ ອື່ນກັບປະເທດເຮົາບໍ່ແມ່ນປັດໃຈສຳຄັນຕົ້ນຕໍທີ່ກະຕຸກຊຸກຍູ້ໃຫ້ແກ່ການໂຍກຍ້າຍອອກ.

When there is in-migration to certain areas (see Map C.3), it goes without saying that the in-migrants must have migrated from somewhere. Therefore this map presents the percentage of people who have out-migrated from each village. It should be borne in mind that the total out-migration is higher than the in-migration with some people moving abroad, but mainly with Vientiane Capital absorbing the majority of migrants within the country.

One important feature that strikes the observer of this map is that the general spatial pattern is very similar to the pattern of Map C.3. In other words, regions with high in-migration rates are generally also those regions with high out-migration rates. Rural to rural migration in the Lao PDR could therefore be interpreted as less than a process in which the population clearly moves from one part of the country to another, but rather as an exchange of people across more dynamic regions. This leaves some areas with very little migration dynamics, whereas others face in- as well as out-migration.

Village out-migration was lowest in the northern provinces of Phongsaly, and Huaphanh, the central provinces of Khammuane and Savannakhet, and the southern provinces of Sekong and Attapeu. However, within these provinces some areas experienced higher levels of out-migrations: the eastern district of Phongsaly and of Huaphanh provinces; the Nakhai region of Khammuane province, and some areas in Savannakhet province. A few villages in the south had an out-migration of more than 3%; namely, villages in some eastern areas of Sekong province, in Attapeu province and along the Mekong river in Champasack province. High out-migrations can also be observed in Saravane where many villages in the province have out-migration rates greater than 3%. In Vientiane Capital the village out-migrations occur from the regions located outside the main municipality.

It is interesting to see that out-migration patterns are not significantly higher near the borders of neighbouring countries. Apparently, the geographical proximity of other countries does not seem to be the most crucial factor stimulating migration.

C.4
ການຍົກຍ້າຍອອກນອກບ້ານ
Village out-migration



C.5

ການຍົກຍ້າຍທັງໝົດ
Total migration

ໃນແຜນທີ່ນີ້ແມ່ນສະແດງໃຫ້ເຫັນພາບໂດຍລວມຂອງຄວາມສາມາດເຄື່ອນຍ້າຍໂດຍລວມຂອງ ປະຊາກອນລາວ ໃນຊ່ວງໄລຍະ 12 ເດືອນກ່ອນການສຳຫລວດ, ຜູ້ທີ່ໜີອອກຈາກ ຫຼື ຍົກຍ້າຍອອກ ຈາກບ້ານເດີມຂອງພວກເຂົາ ແລະໄດ້ມາເຖິງ ຫຼື ຍົກຍ້າຍມາຫາອີກບ້ານ, ເມືອງ, ຫຼື ແຂວງອື່ນໆ. ເວົ້າ ອີກດ້ານໜຶ່ງວ່າແຜນທີ່ນີ້ແມ່ນເປັນການສະຫຼຸບຫຍໍ້ ທີ່ສະແດງໃຫ້ເຫັນພາບການເຄື່ອນໄຫວໃນແຜນທີ່ 2 ອັນກ່ອນຂອງ C.3 ແລະ C.4.

ການຍົກຍ້າຍທັງໝົດແມ່ນສະແດງອອກໃນ 5 ລະດັບທີ່ແບ່ງແຍກອອກເປັນເງົາມືດສີມ້ວງທີ່ແຕກ ຕ່າງກັນ, ໃນການຈັດອອກເປັນລຳດັບຕ່ຳກວ່າ 0.5% ໄປຫາຫຼາຍກວ່າ 10% ຂອງຈຳນວນຊາວບ້ານ ທີ່ເຄື່ອນຍ້າຍຜ່ານເຂົ້າ ແລະ ອອກ ຂອງບ້ານ. ເຊິ່ງສີມ້ວງອ່ອນແມ່ນ ກວມເອົາແຜນທີນີ້ມັນສະແດງ ການ ຊີ້ບອກໃຫ້ເຫັນລະດັບຄວາມສາມາດເຄື່ອນຍ້າຍຂອງຊາວບ້ານ ລະຫວ່າງລະດັບທີ່ຕ່ຳກວ່າ 0.5% ແລະ ສູງກວ່າ 1%. ການແຈກຍາຍທີ່ສະແດງດວ້ຍສີມ້ວງກາງໆ ແມ່ນສະແດງໃຫ້ຮູ້ວ່າແມ່ນຢູ່ ໃນລະດັບ ລະຫວ່າງ 2 ຫາ 5% ແລະ ສະແດງອອກເປັນ ຄືຮູບເມັດແກ້ວນອ້ຍໆ ທີ່ຕິດລຽນກັນຈາກ ແຂວງຄຳມ່ວນ ລົງໄປໂດຍກົງສູ່ພາກໃຕ້ໄປເຖິງແຂວງຈຳປາສັກ, ແຂວງເຊກອງ, ແລະ ແຂວງອັດຕະປື, ແລະ ມັນກໍ່ຍັງ ມີຫຼາຍຢ່ຳຢາຍເລາະລຽບຕາມເສັ້ນທາງຫຼວງແຄມແມ່ ນ້ຳຂອງ. ມີໜຽງບ້ານສວ່ນໜອ້ຍ ທີ່ສະແດງອັດຕາ ການຍົກຍ້າຍລະຫວ່າງ 5 ຫາ 10% ຂອງປະຊາກອນໃນບັນດາແຂວງພາກໃຕ້ສຸດ.

ໃນທາງກົງກັນຂ້າມ, ໃນທຸກໆ ແຂວງທີ່ຢູ່ພາກເໜືອຂອງແຂວງຄຳມ່ວນ ມີຈຸດແຕ້ມເປັນຈຸດໆ ທີ່ ເຫັນໄດ້ ຊັດເຈນຍິ່ງຂຶ້ນໃນເຂດທີ່ມີການຍົກຍ້າຍເຂົ້າ ແລະ ອອກ; ໃນບາງເຂດມີການເຄື່ອນຍ້າຍຂອງ ປະຊາກອນຂ້ອນຂ້າງສູງຊຶ່ງຢູ່ໃນລະຫວ່າງ 5 ຫາ 10%, ແລະ ໃນບາງເຂດສະເພາະໃດໜຶ່ງແມ່ນມີ ອັດຕາຫຼາຍກວ່າ 10%. ອັດຕາການເຄື່ອນຍ້າຍທີ່ມີໜອ້ຍກ່ວາອັດຕາດັ່ງກ່າວຢູ່ໃນລະດັບອັດຕາທີ່ “ປົກກະຕິ” ຄື 0.5 ຫາ 1% ແມ່ນພົບເຫັນໄດ້ໃນແຂວງຫົວພັນ, ທາງພາກໄຕ້ຂອງແຂວງຫຼວງນ້ຳທາ, ທາງພາກຕາເວັນຕົກ ຊ່ຽງເໜືອ ແລະ ທາງພາກຕາເວັນຕົກຂອງແຂວງໄຊຍະບູລີ, ແລະ ແຂວງຜົ້ງສາລີ. ອີກຄັ້ງໜຶ່ງ, ຢູ່ໃນບາງເຂດຊາຍແດນທາງພາກຕາເວັນອອກປະກົດມີທ່າອ່ຽງໜອ້ຍໃນການຍົກຍ້າຍ; ເຖິງຢ່າງໃດກໍ່ຕາມ, ໃນຂົງເຂດດັ່ງກ່າວນີ້ແມ່ນເປັນເຂດພູສູງ, ເປັນແຫຼ່ງອາໃສຂອງກຸ່ມຄົນຊົນເຜົ່າ ຕ່າງໆຊຶ່ງແມ່ນກຸ່ມຄົນທີ່ບາງເທື່ອກໍ່ບໍ່ຮູ້ຈັກໃຊ້ພາສາລາວ. ເຊິ່ງໂດຍປົກກະຕິແລ້ວການຍົກຍ້າຍຂອງ ພວກເຂົາແມ່ນຂຶ້ນກັບການເຄື່ອນຍ້າຍຕາມຮອບວຽນຂອງການປູກຝັງແລະດັ່ງນັ້ນການເຄື່ອນຍ້າຍ ຂອງພວກເຂົາເຫຼົ່ານັ້ນຈຶ່ງບໍ່ບັນທຶກເຂົ້າໃນການຍົກຍ້າຍຖາວອນ.

ສະຫຼຸບແລ້ວ, ຄວາມສາມາດໃນການເຄື່ອນຍ້າຍຂອງປະຊາກອນໃນຊ່ວງໄລຍະເວລາ 12 ເດືອນກ່ອນ ການສຳຫລວດຊີ້ໃຫ້ເຫັນວ່າຢູ່ໃນລະຫວ່າງ 1 ຫາ 5% ຂອງຄອບຄົວທີ່ມີການເຄື່ອນຍ້າຍ ອອກຈາກ ເຮືອນຂອງຕົນ ແລະ ໃນຂະນະທີ່ຄົນອື່ນໆ ກໍ່ຕອ້ງການກັບຄືນສູ່ຖິ່ນກຳເນີດຂອງຕົນເອງເພື່ອ ລົງທຶນເງິນ ທີ່ພວກເຂົາໄດ້ທ້ອນໄວ້, ເຮັດທຸລະກິດຂະໜາດນອ້ຍ ຫຼື ແຕ່ງງານ. ສາຍພົວພັນກ່ຽວກັບ ຄອບຄົວ ຫຼື ເພື່ອນບ້ານໃກ້ຄຽງອາດມີອິດທິພົນຕໍ່ການຕັດສິນໃຈໃຫ້ຍ້າຍໄປຢູ່ໃນເຂດແດນໃໝ່ຊຶ່ງແນະ ນຳວ່າດີກວ່າ ແລະ ມີຄວາມໝັ້ນຄົງປອດໄພໃນການຄົບຄ້າສະມາຄົມກັບຄອບຄົວ ຫຼື ເພື່ອນຝູງທີ່ມີມາ ແຕ່ກ່ອນແລ້ວ ຢູ່ທີ່ນັ້ນ. ຜ່ານການສຳຫລວດພົບວ່າເຫດຜົນສ່ວນໃຫຍ່ທີ່ຜູ້ຊາຍຍົກຍ້າຍແມ່ນເພື່ອສ້າງ ເສດຖະກິດ, ຫາ ວຽກເຮັດງານທຳທີ່ມີລາຍໄດ້ດີ ຫຼື ວຽກທີ່ຢູ່ໃກ້ບ່ອນທີ່ເຂົາຢູ່ ແຕ່ໃນຂະນະທີ່ຜູ້ຍິງສ່ວນ ໃຫຍ່ແລ້ວ ຍົກຍ້າຍຍອ້ນຖືກບີບບັງຄັບຈາກສັງຄົມ, ການກັບຄືນໄປຫາຄອບຄົວ, ການສຶກສາທີ່ດີກ່ວາ, ແລະ ການບໍລິການທາງດ້ານສາທາລະນະສຸກ ທີ່ດີກ່ວາ. ອັດຕາສ່ວນການເພີ້ມຂຶ້ນຂອງປະຊາກອນໃນ ແຕ່ລະປີທີ່ມີປະມານ 125,000 ຄົນ ແລະ ມັນບໍ່ສາມາດຮູ້ໄດ້ວ່າຄວາມກົດດັນມີຫຼາຍໜຽງໃດທີ່ ຈະ ກະທົບໃສ່ຕົວເມືອງ ແລະ ແຂວງ, ຕາມດິນແດນ ແລະ ຕາມເຂດແຫຼ່ງຊັບພະຍາກອນທາງ ທຳມະຊາດ ແລະ ຄວາມຕ້ອງການທີ່ຈະຍົກຍ້າຍໄປຢູ່ໃນທີ່ອື່ນ.

The map presents an overview of the total mobility of the Lao people during the 12 months prior to the census, those who leave or migrate out of their village and arrive in or migrate to other villages, districts, or provinces. In other words this map summarises the dynamics shown in the preceding two maps, Map C.3 and Map C.4.

The total migration is shown in five frequency classes distinguished by different shades of purple, in ranges from less than 0.5% to over 10% of villagers moving into or out of a village. A light purple dominates the map indicating that between less than 0.5% and up to 1% of village populations are mobile. The spatial scatter and the amount of medium blue represents migration rates of between 2 and 5% and appears as an open mosaic from Khammuane and going south to Champasack, Sekong and Attapeu. This is more pronounced along the Mekong highway. Only a few villages show a migration rate of between 5 and 10% of the population in the southernmost provinces.

In contrast, all of the provinces north of Khammuane are more markedly dotted with areas of in and out migrations; some are quite high with between 5 and 10% of the villagers on the move, and in some exceptional areas even more than 10%. Less intensive movements with a “normal” migration rate of 0.5 to 1% are observed in the province of Huaphanh, the south of Luangnamtha, in the northwest and west of Xayaboury, and in Phongsaly. Once again, some areas along the eastern border appear less inclined to migration; however, these are mountainous regions, inhabited by hill-dwelling tribal groups, often not conversant with the Lao language. Their movements are usually local as part of shifting cultivation cycles and therefore are not often recorded as true migration.

Summarising, the mobility of people during the 12 months preceding the Census indicates that between 1 and 5% of families move from their homes, while others return to their origins for example, to invest saved money, establish a small business or get married. Family and neighbourly bonds may influence the decision to move to a new place described as better and with the security of meeting family or friends already established there. Investigations have shown that male migrants move primarily for economic reasons, finding a job with better pay or nearer while female migrants are driven more by social arguments, family reunion, better schools and health services. It is not known how much pressure the annual population growth of about 125,000 new citizens is going to put on district and provincial towns, on land and natural resources and the need to migrate elsewhere.

C.5
ການຍ້າຍຖິ່ນທັງໝົດ
Total migration



C.6

ການຍົກຍ້າຍເຂົ້າໄປໃນນະຄອນຫລວງວຽງຈັນ

Migration to Vientiane capital

ໃນປະເທດທີ່ກຳລັງພັດທະນາ ເມືອງເອກແມ່ນເປັນສະຖານທີ່ຊຶ່ງສະແດງເຖິງລັກສະນະສະເພາະ ຂອງຊາດ ແລະ ເປັນເມືອງທີ່ໄດ້ຮັບການລົງທຶນເພີ່ມເຕີມຈາກລັດຖະບານເພື່ອພັດທະນາໂຄງລ່າງ, ການທ່ອງທ່ຽວ, ແລະ ເງື່ອນໄຂຄວາມສະດວກ ສະບາຍໃນການຄົບຄ້າສະມາຄົມກັບຕ່າງປະເທດ. ນະຄອນຫຼວງວຽງຈັນຈຶ່ງປຽບເໝືອນເປັນແມ່ເຫຼັກ ທີ່ດຶງດູດຄົນຜູ້ທີ່ຢູ່ໃກ້ ຫຼື ໄກໃນການເຂົ້າມາ ສະແຫວງຫາເອົາຊີວິດທີ່ດີກວ່າ. ເຖິງຢ່າງໃດກໍ່ດີ, ແຕ່ການດຶງດູດດັ່ງກ່າວນີ້ແມ່ນບໍ່ໄດ້ຂະຫຍາຍ ອອກຢ່າງເທົ່າທຽມກັນໃນທົ່ວປະເທດ. ໃນແຜນທີ່ນີ້ແມ່ນໄດ້ອະທິບາຍ ເຖິງຕົ້ນກຳເນີດຂອງຜູ້ທີ່ ຍົກຍ້າຍເຂົ້າມານະຄອນຫຼວງວຽງຈັນ ເຊິ່ງມີ 2 ວິທີທີ່ແຕກຕ່າງກັນ. ຢ່າງທຳອິດແມ່ນເງົາສີແດງມີຢູ່ໃນ 6 ລະດັບທີ່ແຕກຕ່າງກັນສະແດງໃຫ້ເຫັນເຖິງຈຳນວນສ່ວນຮ້ອຍຂອງປະຊາກອນແຕ່ລະເມືອງທີ່ໄດ້ ຍົກຍ້າຍເຂົ້າມານະຄອນຫລວງວຽງຈັນ. ແລະ ຢ່າງທີ່ສອງແມ່ນຈຸດນອ້ຍແມ່ນສະແດງໃຫ້ເຫັນເຖິງ ຈຳນວນຕົວເລກທີ່ແນ່ນອນຂອງຈຳນວນປະຊາກອນທີ່ຍົກຍ້າຍເຂົ້າມານະຄອນຫລວງວຽງຈັນ, ເຊິ່ງແຕ່ ລະຈຸດ ແມ່ນເປັນສັນຍາລັກໃຫ້ແກ່ 100 ຄົນ.

ໂດຍການນຳໃຊ້ຕົວຊີ້ 2 ປະເພດນີ້, ບາງມີຮູບແບບທີ່ໜ້າສົນໃຈໃນການຍົກຍ້າຍເຊິ່ງສາມາດ ສັງເກດ ເຫັນໄດ້. ພວກມັນຍັງສາມາດຖືກແຍກອອກໄດ້ເປັນ 3 ປະເພດ. ປະເພດທຳອິດພວກ ເຮົາສາມາດພົບ ເຫັນ ຮູບແບບຂອງເມືອງທີ່ມີອັດຕາສ່ວນການຍົກຍ້າຍເຂົ້າໄປໃນນະຄອນຫລວງ ວຽງຈັນໃນອັດຕາສູງ. ເມືອງເຫຼົ່ານີ້ແມ່ນກວມຍາວອອກໄປຈາກແຂວງວຽງຈັນຂ້າມແຂວງ ຊຽງຂວາງຊຶ່ງຢູ່ໃນພາກກາງຂອງ ປະເທດເລີຍຂຶ້ນໄປຮອດແຂວງຫົວພັນ. ຄວນຈື່ໄວ້ວ່າການຍົກ ຍ້າຍເຂົ້າໄປໃນນະຄອນຫລວງວຽງຈັນ ຈາກຂົງເຂດເຫຼົ່ານີ້ແມ່ນມີສູງນັບທັງຈຳນວນຕົວເລກ ແລະ ອັດຕາສ່ວນຮ້ອຍຂອງພົນລະເມືອງທີ່ມາຈາກ ແຂວງກຳເນີດຂອງພວກເຂົາ. ຂົງເຂດທີ່ສອງ ຂອງການ ຍົກຍ້າຍອອກເຊິ່ງສາມາດພົບເຫັນແມ່ນເຂດ ພາກໃຕ້ລຽບຕາມແຄມແມ່ນ້ຳ ຂອງ. ເຖິງແມ່ນວ່າຈຳ ນວນຂອງຈຸດສີຂຽວຈະມີຫຼາຍຊຶ່ງມັນກໍ່ໜາຍ ເຖິງຈຳນວນປະຊາກອນມີຫຼາຍເຊັ່ນດຽວກັນແຕ່ສິ່ງນີ້ ເປັນພຽງສ່ວນປະກອບເປັນສ່ວນຮ້ອຍນອ້ຍໆ ຂອງປະຊາກອນຢູ່ໃນເມືອງ. ຜົນຂອງສະຖິຕິສະແດງໃຫ້ ເຫັນເຖິງຜູ້ທີ່ຍົກຍ້າຍຈາກແຂວງເຫຼົ່ານີ້ສ່ວນ ໃຫ່ຍແມ່ນເລືອກທີ່ຈະໄປ ປະເທດໄທ ຫຼາຍກວ່າໄປນະ ຄອນຫລວງວຽງຈັນ. ສຸດທ້າຍ, ແມ່ນຮູບແບບທີ່ ສາມຂອງເມືອງທີ່ມີການຍົກຍ້າຍຫຼາຍເພື່ອເຂົ້າມານະ ຄອນຫລວງວຽງຈັນແມ່ນສາມາດ ພົບເຫັນໄດ້ ຕາມເຂດຫວ່າງຊາຍແດນ ທີ່ລະຫວ່າງແຂວງໄຊຍະບູລີ ຫາ ແຂວງຫຼວງພະບາງ ແລະ ຂະຫຍາຍກວ້າງ ອອກໄປເຖິງແຂວງຜົ້ງສາລີ. ໃນເມືອງຕ່າງໆ ເຫຼົ່ານີ້, ຍົກເວັ້ນເມືອງຫຼວງພະບາງ, ສ່ວນຈຳນວນຕົວເລກ ລວມທັງໝົດຂອງຜູ້ທີ່ຍົກຍ້າຍແມ່ນມີຂ້ອນຂ້າງຕ່ຳ, ແຕ່ຈຳນວນດັ່ງກ່າວ ແມ່ນສະແດງໃຫ້ເຫັນເຖິງ ຈຳນວນສ່ວນຮ້ອຍທີ່ຫຼາຍຂອງປະຊາກອນຢູ່ໃນເມືອງ. ມີບາງພື້ນທີ່ແມ່ນເກືອບບໍ່ມີການຍົກຍ້າຍອອກ ຈາກເຂດແດນນັ້ນໄປຫານະຄອນຫລວງວຽງຈັນເຊັ່ນໃນ ຂົງເຂດທາງພາກເໜືອສຸດຂອງປະເທດ ແລະ ລຽບຕາມສາຍພູຫລວງໄປຫາທາງພາກຕາເວັນອອກສ່ຽງ ໃຕ້ຂອງ ສປປ ລາວ.

ເຫດຜົນທີ່ຜັກດັນໃຫ້ມີການເຄື່ອນຍ້າຍຈາກຊົນນະບົດ ໄປຫາ ຕົວເມືອງມັນອາດຈະບໍ່ແຕກຕ່າງ ກັນກັບເຫດຜົນທີ່ພວກເຮົາໄດ້ປຶກສາຫາລືກັນຢູ່ໃນແຜນທີ່ສະບັບກ່ອນຂອງພາກນີ້ຕົວຢ່າງເຊັ່ນ: ການ ຊອກຫາວຽກເຮັດງານທຳ, ແລະ ພ້ອມກັນນັ້ນກໍ່ມີເຫດຜົນຂອງການສຶກສາ ແລະ ການບໍລິການ ທາງ ດ້ານສາທາລະນະສຸກ ຫຼື ຍອ້ນມີສະມາຊິກໃນຄອບຄົວໄດ້ຍ້າຍໄປຢູ່ກອ່ນແລ້ວ ແລະ ຢາກຕາມໄປ. ບົດບາດທີ່ສຳ ຄັນເຊິ່ງໄດ້ຖືກແນະນຳໃຫ້ໃຊ້ແມ່ນໂທລະສັບມືຖືທີ່ສາມາດ ແລກປ່ຽນຂໍ້ມູນກັບຄອບຄົວ ຫຼື ເພື່ອນຝູງຢູ່ທີ່ບ້ານ ຫຼື ລະຫວ່າງຄອບຄົວ ຫຼື ເພື່ອນຝູງທີ່ໄດ້ຍ້າຍໄປ ຢູ່ໃນນະຄອນຫຼວງວຽງຈັນແລ້ວ.

ເພື່ອໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນອີກ ແລະ ການຕີຄວາມໝາຍຂອງໄລຍະຮູບແບບຕ່າງໆເຫຼົ່ານີ້, ມັນມີຄວາມສຳຄັນທີ່ເຮົາຈະຕ້ອງໄດ້ເບິ່ງທີ່ແຜນທີ່ອື່ນໆຢູ່ໃນປຶ້ມແຜນທີ່ນີ້. ຈາກແຜນທີ່ໃນພາກ F ພວກເຮົາສາມາດເຫັນໄດ້ວ່າ ກຸ່ມຊົນເຜົ່າແມ່ນມີບົດບາດສຳຄັນຫຼາຍ. ຄວາມຈິງທີ່ນະຄອນຫລວງ ວຽງຈັນຍັງມີຊົນເຜົ່າທີ່ຄ້າຍກັນນີ້ມັນສະແດງໃຫ້ເຫັນວ່າມີຫຼາຍກຸ່ມຊົນເຜົ່າທີ່ຍັງບໍ່ໄດ້ຍ້າຍເຂົ້າໄປໃນ ນະຄອນຫລວງວຽງຈັນເທື່ອ. ສິ່ງເຫຼົ່ານີ້ມັນໄດ້ໃຫ້ບາງຄຳຄິດເຫັນວ່າການໂຍກຍ້າຍຈາກເຂດຊົນນະບົດ ໄປຫາເຂດຕົວເມືອງແມ່ນຍັງເປັນສອງຂັ້ນຕອນຂອງຂະບວນການໂຍກຍ້າຍ. ບາດກ້າວທຳອິດ, ປະຊາກອນບາງຈຳນວນຈະໂຍກຍ້າຍໄປຢູ່ທີ່ເມືອງ ຫຼື ເທດສະບານແຂວງ ຊຶ່ງໃນຂະນະທີ່ບາງຈຳນວນ ກໍ່ໂຍກຍ້າຍຈາກສະຖານທີ່ດັ່ງກ່າວນີ້ໄປຫານະຄອນຫລວງວຽງຈັນ. ດັ່ງທີ່ພວກເຮົາ ເຫັນໃນແຜນທີ່ C.2, ເມືອງຫຼວງພະບາງແມ່ນເປັນເມືອງທີ່ເປັນທາງຜ່ານຊຶ່ງອີງຕາມກໍລະນີຂອງ ການຍົກຍ້າຍ. ມັນເປັນເມືອງ ທີ່ຮອງຮັບເອົາຄົນເປັນຈຳນວນຫຼວງຫຼາຍຈາກເມືອງອອ້ມຂ້າງແຕ່ວ່າໃນເວລາດຽວກັນ ນັ້ນມັນກໍ່ໄດ້ນຳສົ່ງ ຄົນຈຳນວນຫຼວງຫຼາຍໄປຫານະຄອນຫລວງວຽງຈັນ.

ໃນພາກ ຫຼື ຕອນຕໍ່ໄປຂອງການຍົກຍ້າຍຢ່າງຕໍ່ເນື່ອງເຂົ້າໄປຫານະຄອນຫລວງວຽງຈັນອາດຈະມີ ການ ຈຳກັດໃນການບໍລິການຕໍ່ສາທາລະນະໄວກວ່າການຄາດໄວ້ລ່ວງໜ້າ. ດັ່ງນັ້ນມັນຈຶ່ງຄວນໃຫ້ມີ ການ ກະຈາຍສິ່ງຕ່າງໆ ແລະ ສ້າງສູນກາງການພັດທະນາແຫ່ງໃໝ່ຢູ່ພື້ນທີ່ອອ້ມຂ້າງທົ່ວເມືອງຂອງ ແຂວງຕ່າງໆ. ໃນຂະນະທີ່ມີການຍົກຍ້າຍການໃຫ້ການຊ່ວຍເຫຼືອເພື່ອແລກປ່ຽນປະສົບການ ແລະ ຂໍ້ມູນ ເພື່ອບໍ່ໃຫ້ຄວາມບໍ່ເທົ່າທຽມກັນໃນສັງຄົມເພີ້ມຂຶ້ນ.

In developing countries the capital city is frequently the national showcase receiving additional government funding for infrastructure development, tourism, and advanced facilities for the international community. The capital of Vientiane has always acted as a magnet attracting people from near and far in search of a better life. However, this attraction does not extend equally over the whole country. This map depicts the origin of migrants to Vientiane Capital in two different ways. Firstly, the shading in six different shades of red shows the percentage of the population of each district which has moved to Vientiane. And secondly, the dots show the absolute number of lifetime migrants to the capital city, where each dot represents 100 people.

Using these two indicators, some interesting general migration patterns can be observed. They can be roughly categorised into three types. First we find a pattern of districts with high migration rates to Vientiane Capital. These districts stretch from Vientiane Province across the central province of Xiengkhuang and up to Huaphanh. It should be noted that the movement to Vientiane from these regions is high both in total numbers and in percentages of the population of the originating provinces. A second region of out-migration can be found southwards along the Mekong River. Even though the number of green dots and hence the number of people is considerable, this only constitutes a rather small percentage of the district populations. Statistics show that a majority of migrants from these provinces choose Thailand rather than Vientiane as a destination. Finally, the third spatial pattern of districts with pronounced migration to Vientiane can be found along a corridor from Xayabury to Luangprabang and extending up to Phongsaly Province. In many of these districts, with the exception of Luangprabang district itself, the total number of migrants is rather modest but they represent a considerable percentage of the district populations. Almost no migrants to the capital city depart from some regions, namely from those in the very north of the country and along the Annamite chain to the south-eastern parts.

The forces driving this rural-urban migration are probably not different to the reasons discussed in the previous maps of this section, i.e. the search for employment, but also the availability of educational and health services or the desire to follow other family members who have already migrated. A significant role is played by the introduction of mobile phones which allow the sharing of information between family or friends at home or between those already installed in Vientiane Capital.

For a better understanding and interpretation of these spatial patterns, it is important to look at other maps in this atlas. From the maps in section F we can see that ethnicity plays a crucial role. The fact that Vientiane is ethnically still quite homogenous indicates that many minorities have not yet moved to the city. This implies that rural-urban migration is still a two-step process. First, some people move to district or provincial capitals while others move from there to Vientiane. As we can see in Map C.2, Luangprabang town is really a transit town in terms of migration. It receives many people from surrounding districts but at the same time sends many people to Vientiane.

The continuation of this influx of migrants to Vientiane may limit public services much faster than foreseen. It is therefore desirable to decentralise and establish new development centres around the provincial towns. While migration contributes to the exchange of experience and information it should not contribute to increasing social disparities.

C.6
ການຍົກຍ້າຍເຂົ້າໄປໃນນະຄອນຫລວງວຽງຈັນ
Migration to Vientiane capital